TRƯỜNG ĐẠI HỌC TÂY BẮC

SỞ GIÁO DỤC VÀ THỂ THAO
TỈNH BÒ KẸO

# BIÊN BẢN GHI NHỚ HỢP TÁC
# GIỮA TRƯỜNG ĐẠI HỌC TÂY BẮC - BỘ GIÁO DỤC VÀ ĐÀO TẠO NƯỚC CHXHCN VIỆT NAM VÀ SỞ GIÁO DỤC VÀ THỂ THAO TỈNH BÒ KẸO NƯỚC CHDCND LÀO

Nhằm mục tiêu thiết lập quan hệ hợp tác giữa Trường Đại học Tây Bắc - Bộ Giáo dục và Đào tạo (Nước CHXHCN Việt Nam) và Sở Giáo dục và Thể thao tỉnh Bò Kẹo (Nước CHDCND Lào); tăng cường mở rộng quan hệ hợp tác quốc tế trong lĩnh vực giáo dục và đào tạo; tăng cường công tác phối hợp, trao đổi thông tin trong đào tạo, quản lý Lưu học sinh Lào; thắt chặt tình đoàn kết giữa hai nước Việt - Lào,

Hôm nay, ngày 11 tháng 4 năm 2015, tại Sở Giáo dục và Thể thao tỉnh Bò Kẹo (Nước CHDCND Lào), chúng tôi gồm:

**Bên A: Trường Đại học Tây Bắc - Bộ Giáo dục và đào tạo Nước CHXHCN Việt Nam**

Địa chỉ: Đường Chu Văn An, phường Quyết Tâm, thành phố Sơn La

Điện thoại: 0223.751.700 Fax: 0223.751.701

Đại diện: Ông Đoàn Đức Lân Chức vụ: Phó Hiệu trưởng

Ông: Đỗ Hồng Đức Trưởng phòng Đào tạo đại học

Ông: Vũ Trọng Lưỡng Trưởng phòng KHCN&HTQT

**Bên B: Sở Giáo dục và Thể thao tỉnh Bò Kẹo**

Địa chỉ: Bản Huổi Sai Tảy, Huyện Huổi Sai, tỉnh Bò Kẹo

Điện thoại: 084211451 Fax: 084211451

Đại diện: Ông Sồm Sắc Căm Mạ Nị Phăn Chức vụ: Phó Giám đốc Sở GD&TT

Ông: Sụ Lin Tha Ma Lin - Trưởng phòng Giáo dục Phổ thông

Ông: Sẻng Đườn Lạn Khăm Đeng - Phó phòng Kế hoạch – Thống kê

Cùng đại diện Trưởng, phó các phòng chuyên môn: Phòng Hành chính, phòng Tổ chức cán bộ, phòng Thanh tra, phòng Giáo dục Chuyên nghiệp, phòng Phát triển giáo viên, phòng giáo dục Mầm non - Tiểu học, phòng Giáo dục thường xuyên, phòng Thể thao quần chúng, phòng Thể thao cấp quốc gia, phòng Hậu cần – Văn hóa.

Hai bên đã tiến hành bàn bạc, thống nhất và cùng ký kết Biên bản ghi nhớ với nội dung cụ thể như sau:

**I. Nội dung thỏa thuận hợp tác**

1. Đồng ý tăng cường quan hệ hợp tác trong lĩnh vực giáo dục và đào tạo Lưu học sinh Lào.

2. Thống nhất quy trình tuyển sinh, thời gian thực hiện công tác tuyển sinh và công tác quản lý Lưu học sinh tỉnh Bò Kẹo tại Trường Đại học Tây Bắc theo diện tự túc kinh phí theo quy trình đang thực hiện đối với Lưu học sinh Lào trong chương trình hợp tác giữa tỉnh Sơn La với các tỉnh Bắc Lào.

3. Lưu học sinh Lào khi sang Trường Đại học Tây Bắc học tập phải đảm bảo các điều kiện để được xét tuyển thẳng theo quy định của Bộ Giáo dục và Đào tạo Nước CHXHCN Việt Nam đối với thí sinh là người nước ngoài và quy định của Bộ Giáo dục và Thể thao Nước CHDCND Lào.

4. Hai bên có trách nhiệm thường xuyên trao đổi thông tin về:

- Nhu cầu học tập của học sinh tỉnh Bò Kẹo tại Trường Đại học Tây Bắc.

- Ngành nghề đào tạo và khả năng tiếp nhận Lưu học sinh Lào của Trường Đại học Tây Bắc.

- Tình hình học tập, rèn luyện của Lưu học sinh Lào của tỉnh Bò Kẹo tại Trường Đại học Tây Bắc.

5. Thống nhất mức học phí đối với Lưu học sinh Lào học tại Trường Đại học Tây Bắc theo diện tự túc bằng mức học phí đào tạo Lưu học sinh Lào trong chương trình hợp tác của tỉnh Bò Kẹo với tỉnh Sơn La. Kinh phí năm 2015 là: 12.000.000 VNĐ một năm/1 người, bao gồm học phí, bảo hiểm y tế, khám sức khỏe định kỳ, ký túc xá, điện nước trong định mức.

6. Thống nhất chương trình học bổng Đại học và Sau đại học cho Lưu học sinh Lào tại Trường Đại học Tây Bắc. Mỗi năm, Trường Đại học Tây Bắc cấp 01 suất học bổng Đại học và 01 suất học bổng Sau đại học (gồm học phí, bảo hiểm y tế, khám sức khỏe định kỳ, ký túc xá, điện nước trong định mức) cho Lưu học sinh Lào của Bò Kẹo sang học tập tại Trường. Tùy theo nhu cầu thực tiễn của từng năm tỉnh Bò Kẹo có thể thay suất học bổng Sau đại học bằng suất học bổng Đại học.

- Mỗi năm, nếu tỉnh Bò Kẹo đưa học sinh thuộc diện tự túc sang đào tạo tại trường Đại học Tây Bắc từ 10 học sinh trở lên sẽ được cấp thêm 01 suất học bổng và cứ tăng thêm 10 học sinh thì được tăng thêm 01 suất học bổng.

7. Trong quá trình hợp tác đào tạo, nếu xuất hiện nhu cầu gặp gỡ, trao đổi đôi bên thì bên cử người tự chi trả kinh phí đi lại quốc tế, bên mời chịu trách nhiệm chi phí ăn, ở, đi lại nội địa.

8. Thống nhất đầu mối liên lạc, trao đổi thông tin như sau:

- Về phía Trường Đại học Tây Bắc: Ông Đỗ Hồng Đức - Trưởng phòng Đào tạo đại học, số điện thoại: 0982.143.838, email: dohongduc2008@gmail.com, Ông Vũ Trọng Lưỡng

- Trưởng phòng Khoa học công nghệ và Hợp tác quốc tế, số điện thoại: 0915.158.759, email: vutrongluong@gmail.com.

- Về phía Sở Giáo dục và Thể thao tỉnh Bò Kẹo: On Kẹo Chăm Ta Na – Phó phòng giáo dục chuyên nghiệp, điện thoại: +8562022381139; +8562055184139. Kết Kẹo Sí Bua Khăm - Chuyên viên phòng giáo dục phổ thông, điện thoại: +8562056970061, email: pes.bokeo@gmail.com. Nàng Phệt Lăm Phon – Chuyên viên phòng kế hoạch – thống kê, điện thoại: +8562056970062.

**II. Nguyên tắc, phương pháp hợp tác và triển khai**

1. Hai bên cùng làm việc, trao đổi hợp tác dựa trên tinh thần hữu nghị, tôn trọng lẫn nhau.

2. Biên bản này sẽ là cơ sở cho việc ký kết thoả thuận hợp tác giữa hai đơn vị trong thời gian tới.

3. Biên bản ghi nhớ này được lập thành 04 bản gốc, hai bản bằng tiếng Việt và hai bản bằng tiếng Lào có nội dung và giá trị như nhau.

Mỗi bên giữ 01 bản tiếng Lào và 01 bản tiếng Việt để theo dõi thực hiện.

Biên bản này đã được hai bên thông qua, có hiệu lực kể từ ngày ký.

| | |
|---|---|
| **SỞ GIÁO DỤC VÀ THỂ THAO TỈNH BÒ KẸO PHÓ GIÁM ĐỐC** | **TRƯỜNG ĐẠI HỌC TÂY BẮC PHÓ HIỆU TRƯỞNG** |
| **Sổm Sắc Căm Mạ Nị Phăn** | **Đoàn Đức Lân** |

ມະຫາວິທະຍາໄລ ເຕີຍບັກ　　　　　　　　　　ພະແນກສຶກສາທິການ ແລະ ກິລາແຂວງບໍ່ແກ້ວ

## ບົດບັນທຶກຊ່ວຍຈຳ ການຮ່ວມມື
## ລະຫວ່າງມະຫາວິທະຍາໄລເຕີຍບັກ - ກະຊວງສຶກສາທິການ ແລະ ກໍ່ສ້າງ
## ແຫ່ງ ສສ ຫວຽດນາມ ກັບ ພະແນກສຶກສາທິການ ແລະ ກິລາແຂວງບໍ່ແກ້ວ ແຫ່ງ ສປປ ລາວ

.............

ຈຸດປະສົງ:

ເພື່ອສ້າງສາຍພົວພັນການຮ່ວມມືລະຫວ່າງມະຫາວິທະຍາໄລເຕີຍບັກ - ກະຊວງສຶກສາທິການ ແລະ ກໍ່ສ້າງ ( ສສ ຫວຽດນາມ ) ກັບພະແນກສຶກສາທິການ ແລະ ກິລາແຂວງບໍ່ແກ້ວ ( ສປປ ລາວ ).

ເພື່ອເພີ່ມທະວີ ແລະ ເປີດກ້ວາງສາຍພົວພັນການຮ່ວມມືແບບສາກົນໃນຂົງເຂດການສຶກສາ ແລະ ກໍ່ສ້າງ.

ເພື່ອເພີ່ມທະວີວຽກງານການປະສານສົມທົບ ແລະ ແລກປ່ຽນຂໍ້ມູນ ຂ່າວສານໃນການກໍ່ສ້າງ ແລະ ການຄຸ້ມຄອງນັກສຶກສາລາວ.

ເພື່ອພູກແໜ້ນຄວາມສາມັກຄີລະຫວ່າງສອງປະເທດ ຫວຽດນາມ ແລະ ລາວ.

ມື້ນີ້, ວັນທີ 11 ເດືອນ 04 ປີ 2015 ຢູ່ທີ່ພະແນກສຶກສາທິການ ແລະ ກິລາແຂວງບໍ່ແກ້ວ ( ສປປ ລາວ ). ຜູ້ເຂົ້າຮ່ວມລວມມີ:

**ຝ່າຍ ກ:** ມະຫາວິທະຍາໄລເຕີຍບັກ - ກະຊວງສຶກສາທິການ ແລະ ກໍ່ສ້າງ ( ສສ ຫວຽດນາມ ).

ສຳນັກງານຕັ້ງຢູ່: ຖະໜົນຈູວັນອານ, ຄຸ້ມກວ້ຽດເຕີມ, ນະຄອນເຊີນລາ

ໂທລະສັບ: 0223. 751. 700. ແຟັກ: 0223. 751. 701

ຕາງໜ້າໂດຍ: ທ່ານ ດຣ ດ່ວານດຶກເລີນ ຮອງອະທິການບໍດີ.

ທ່ານ ໂດ້ຮົ່ງດຶກ ຫົວໜ້າຂະແໜງ ກໍ່ສ້າງມະຫາວິທະຍາໄລ.

ທ່ານ ຫວູຈ້ອງເຫຼືອງ ຫົວໜ້າຂະແໜງວິທະຍາສາດເຕັກໂນໂລຊີ ແລະ ຮ່ວມມືສາກົນ.

**ຝ່າຍ ຂ:** ພະແນກສຶກສາທິການ ແລະ ກິລາແຂວງບໍ່ແກ້ວ

ສຳນັກງານຕັ້ງຢູ່: ບ້ານໃຫຍ່ຫ້ວຍຊາຍໃຕ້, ເມືອງຫ້ວຍຊາຍ, ແຂວງບໍ່ແກ້ວ.

ໂທລະສັບ - ແຟັກ: 084 211451.

ຕາງໜ້າໂດຍ: + ທ່ານ ສົມສັກ ກຳມະນີພັນ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ

+ ທ່ານ ສຸລິນທາ ມາລິນ ຫົວໜ້າຂະແໜງມັດທະຍົມສຶກສາ.

+ ທ່ານ ແສງເດືອນ ລ້ານຄຳແດງ ຮອງຫົວໜ້າຂະແໜງສະຖິຕິ - ແຜນການ.

+ ນອກຈາກນີ້ຍັງມີຫົວໜ້າ - ຮອງຂະແໜງ: ກວດກາປະເມີນຜົນການສຶກສາ, ຈັດຕັ້ງ - ພະນັກງານ, ອະຊີວະສຶກສາ, ພັດທະນາຄູ, ການສຶກສານອກໂຮງຮຽນ, ສຶກສາກ່ອນໄວຮຽນ - ປະຖົມ, ກິລາມວນຊົນ, ກິລາລະດັບສູງ, ພະລະ - ສິລະປະ, ບໍລິຫານ, ມັດທະຍົມສຶກສາ, ສະຖິຕິ - ແຜນການ.

ທັງສອງຝ່າຍໄດ້ດຳເນີນການປຶກສາຫາລື ແລະ ເປັນເອກະພາບກັນ, ດັ່ງນັ້ນຈຶ່ງພ້ອມກັນລົງນາມເຊັນໃສ່ບົດບັນທຶກ ຊ່ວຍຈຳ ຊຶ່ງມີເນື້ອໃນລະອຽດດັ່ງລຸ່ມນີ້:

**I. ເນື້ອໃນການຕົກລົງການຮ່ວມມື.**

1. ເຫັນດີເພີ່ມທະວີການພົວພັນຮ່ວມມືໃນຂົງເຂດການສຶກສາ ແລະ ກໍ່ສ້າງໃຫ້ນັກສຶກສາລາວ.

2. ເຫັນດີເປັນເອກະພາບໃນຂັ້ນຕອນການຄັດເລືອກ, ການຈັດຕັ້ງຮັບ ແລະ ການຄຸ້ມຄອງນັກສຶກສາລາວຢູ່ມະຫາວິທະຍາໄລເຕີຍບັກ (ທຶນຕົນເອງ) ຕາມລະບຽບກຳນົດພວມໄດ້ປະຕິບັດຕໍ່ນັກສຶກສາລາວລະບົບໃນແຜນຕາມສັນຍາ ຫຼື ແຜນການຮ່ວມມືຂອງແຂວງເຊີນລາຕໍ່ກັບບັນດາແຂວງພາກເໜືອຂອງລາວ.

3. ເມື່ອນັກສຶກສາລາວໄດ້ສົ່ງໄປສຶກສາຢູ່ມະຫາວິທະຍາໄລເຕີຍບັກຕ້ອງຮັບປະກັນບັນດາເງື່ອນໄຂເພື່ອເຂົ້າຮຽນໂດຍບໍ່ຕ້ອງຜ່ານການສອບເສັງຕາມຂໍ້ກຳນົດຂອງກະຊວງສຶກສາທິການ ແລະ ກໍ່ສ້າງແຫ່ງ ສສ ຫວຽດນາມທີ່ມີຕໍ່ນັກສຶກສາຕ່າງປະເທດ.

4. ສອງຝ່າຍມີໜ້າທີ່ຮັບຜິດຊອບການແລກປ່ຽນຂໍ້ມູນຂ່າວສານເຊິ່ງກັນ ແລະ ກັນຢ່າງເປັນປົກກະຕິກ່ຽວກັບ:

- ຄວາມຕ້ອງການສຶກສາຮ່ຳຮຽນຂອງນັກຮຽນແຂວງບໍ່ແກ້ວຢູ່ມະຫາວິທະຍາໄລເຕີຍບັກ.

- ຂະແໜງການກໍ່ສ້າງ ແລະ ຄວາມອາດສາມາດຮັບນັກສຶກສາເຂົ້າຮຽນທີ່ມະຫາວິທະຍາໄລເຕີຍບັກ.

- ສະພາບການຮຽນ, ການຝຶກຝົນຫຼໍ່ຫຼອມຂອງນັກສຶກສາລາວຂອງແຂວງບໍ່ແກ້ວຢູ່ມະຫາວິທະຍາໄລເຕີຍບັກ.

5. ເອກກະພາບຄ່າລົງທະບຽນຮຽນ ສຳລັບນັກສຶກສາລາວທີ່ຮຽນຢູ່ມະຫາວິທະຍາໄລເຕີຍບັກ ໃນລະບົບນອກແຜນ (ທຶນຕົນເອງ) ຈ່າຍຄ່າຮຽນທຽບເທົ່າກັບຄ່າຮຽນຂອງນັກສຶກສາລາວລະບົບໃນແຜນ ຕາມແຜນການຮ່ວມມືລະຫວ່າງແຂວງບໍ່ແກ້ວ ກັບ ແຂວງ ເຊີນລາ ( ຄ່າລົງທະບຽນຮຽນ ປີ 2015 ແມ່ນ: 12.000.000 ດົງ/ປີ/ຄົນ,ໃນນີ້ລວມມີ: ຄ່າຮຽນ, ຄ່ານ້ຳ, ຄ່າຫໍພັກ, ຄ່າໄຟ, ຄ່າປະກັນໄພສຸຂະພາບ, ຄ່າກວດສຸຂະພາບປະຈຳປີ).

6. ເຫັນດີເປັນເອກກະພາບແຜນການໃຫ້ທຶນປະລິນຍາຕີ ແລະ ທຶນຫຼັງປະລິນຍາຕີແກ່ນັກສຶກສາລາວຢູ່ມະຫາວິທະຍາໄລ ເຕີຍບັກ. ແຕ່ລະປີ, ວິທະຍາໄລເຕີຍບັກໃຫ້ທຶນປະລິນຍາຕີ 01 ທຶນ ແລະ ທຶນຫຼັງປະລິນຍາຕີ 01 ທຶນ.

ຖ້າຫາກວ່າປີໃດບໍ່ມີຜູ້ໄປຮຽນທຶນຫຼັງປະລິນຍາຕີ ແມ່ນສາມາດປ່ຽນແທນເປັນທຶນປະລິນຍາຕີໄດ້ ( ຍົກເວັ້ນຄ່າຮຽນ, ຄ່ານ້ຳ, ຄ່າຫໍພັກ, ຄ່າໄຟ, ຄ່າປະກັນໄພສຸຂະພາບ, ຄ່າກວດສຸຂະພາບປະຈຳປີ )ໃຫ້ແກ່ນັກສຶກສາແຂວງບໍ່ແກ້ວທີ່ໄປສຶກສາຮ່ຳຮຽນຢູ່ມະຫາວິທະຍາໄລເຕີຍບັກ.

- ໃນແຕ່ລະປີ ຖ້າແຂວງບໍ່ແກ້ວສົ່ງນັກສຶກສານອກແຜນຈຳນວນ 10 ຄົນໄປສຶກສາຢູ່ມະຫາໄລເຕີຍບັກ ແມ່ນທາງມະຫາໄລເຕີຍບັກມີນະໂຍບາຍໃຫ້ 1 ຄົນ, ບໍ່ໃຫ້ຈ່າຍຄ່າລົງທະບຽນ, ຖ້າຈຳນວນຫຼາຍກໍ່ໃຫ້ໄລ່ຕາມນັ້ນ.

7. ໃນການຈັດຕັ້ງປະຕິບັດການຮ່ວມມືກໍ່ສ້າງ, ຖ້າຫາກວ່າສອງຝ່າຍມີຄວາມຕ້ອງການພົບປະ, ແລກປ່ຽນບົດຮຽນ ໂດຍຝ່າຍຖືກເຊີນຮັບຜິດຊອບດ້ານງົບປະມານໄປມາ ແລະ ຝ່າຍເຊື້ອເຊີນຮັບຜິດຊອບງົບປະມານການກິນຢູ່, ພັກເຊົາ ແລະ ການເຄື່ອນໄຫວໄປມາພາຍໃນ.

8. ເອກະພາບຜູ້ຮັບຜິດຊອບພົວພັນປະສານງານ, ແລກປ່ຽນຂໍ້ມູນຂ່າວສານດັ່ງນີ້:

- ສຳລັບມະຫາວິທະຍາໄລເຕີຍບັກໄດ້ແຕ່ງຕັ້ງ ( ທ່ານ ໂດ້ຫົ່ງດຶກ - ຫົວໜ້າຂະແໜງກໍ່ສ້າງປະລິນຍາຕີ, ເບີໂທ: 0982143868, E-mail: dohongduc2008@gmail.com ); ຂະແໜງວິທະຍາສາດເຕັກໂນໂລຊີ ແລະ ຮ່ວມມືສາກົນ ( ທ່ານ ຫວູຈ້ອງເຫຼືອງ - ຫົວໜ້າຂະແໜງ, ເບີໂທ: 0915158759, E-mail: vutrong luong@gmail.com).

- ສຳລັບພະແນກສຶກສາທິການ ແລະ ກິລາແຂວງບໍ່ແກ້ວໄດ້ແຕ່ງຕັ້ງ ( ທ່ານ ອ່ອນແກ້ວ ຈັນຕະນາ - ຮອງຫົວໜ້າຂະແໜງອາຊີວະສຶກສາ, ເບີໂທ: 020 22381139; 020 55184139. ທ່ານ ເກດແກ້ວ ສີບົວຄຳ - ວິຊາການຂະແໜງມັດທະຍົມສຶກສາ, ເບີໂທ: 020 56970061. ທ່ານ ນາງ ເພັດລຳພອນ ດາວເຮືອງ - ວິຊາການຂະແໜງສະຖິຕິ - ແຜນການ, ເບີໂທ: 020 56970062 ).

**II. ຫຼັກການ, ວິທີການຮ່ວມມື ແລະ ການຈັດຕັ້ງຜັນຂະຫຍາຍ.**

1. ສອງຝ່າຍພ້ອມກັນເຮັດວຽກແລກປ່ຽນການຮ່ວມມືບົນພື້ນຖານນ້ຳໃຈແຫ່ງຄວາມມິດຕະພາບ ນັບຖືຊຶ່ງກັນ ແລະ ກັນ.
2. ບົດບັນທຶກສະບັບນີ້ເປັນພື້ນຖານໃຫ້ແກ່ການເຊັນບົດບັນທຶກການຮ່ວມມືລະຫວ່າງສອງຝ່າຍໃນໄລຍະຕໍ່ໜ້າ.
3. ບົດບັນທຶກຊ່ວຍຈຳໄດ້ສ້າງເປັນ 4 ສະບັບ, 2 ສະບັບເປັນພາສາຫວຽດ ແລະ 2 ສະບັບເປັນພາສາລາວ ແຕ່ລະສະບັບມີເນື້ອໃນ ແລະ ຄຸນຄ່າເທົ່າທຽມກັນ.

   ແຕ່ລະຝ່າຍເກັບຮັກສາໄວ້ 1 ສະບັບເປັນພາສາລາວ ແລະ 1 ສະບັບເປັນພາສາຫວຽດ ເພື່ອເປັນການຕິດຕາມໃນການຈັດຕັ້ງປະຕິບັດ.

   ບົດບັນທຶກສະບັບນີ້ໄດ້ຜ່ານການເຫັນດີຂອງສອງຝ່າຍ ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

| | |
|---|---|
| ໂຮງຮຽນມະຫາວິທະຍາໄລເຕີຍບັກ<br>ຮອງອະທິການບໍດີ<br><br>ດ່ອນດຶກເລີນ | ກ. ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງບໍ່ແກ້ວ<br><br>ສົມສັກ ກອ້ມະນີພົນ |